# ບົດທີ 23

# ຈະບໍ່ຢາກນ້ຳອີກຈັກເທື່ອ




*ເປັນຫຍັງທ່ານຊຶ່ງເປັນຊາວຢິວ ຂໍກິນນ້ຳແດ່ ຈຶ່ງມາຂໍນ້ຳຈາກຊາດຊາມາເລັຍ ໃນບົດຮຽນກ່ອນເຮົາໄດ້ຮຽນເລື່ອງ ພະເຢຊູ ກັບ ນິໂກເດມຊຶ່ງເປັນຟາລິຊາຍ ໃນບົດນີ້ເຮົາຈະຮຽນເລື່ອງອີກຜູ້ ໜຶ່ງທີ່ເວົ້າກັບພະເຢຊູ ຄືຊາວຊາມາເລຍ. ເຫດການນີ້ຢູ່ໃນ ໂຢຮັນ ບົດ 4 ໃຫ້ທ່ານອ້ອນວອນຂໍໃຫ້ ພະເຈົ້າມາຊ່ວຍກ່ອນແລ້ວຈຶ່ງຮຽນຕໍ່ໄປ.*

**1** ບົດຮຽນນີ້ວ່າດ້ວຍຍິງຊາວຊາມາເລຍ ເປັນເຫດການອີກປະການນຶ່ງໃນສະໄໝປີທີ່ ພະເຍຊູ ຕຽມຕົວ ທີ່ພົບໃນ ຂ່າວປະເສີດໂຢຮັນ. ໃນບົດນີ້ເຮົາຈະຮຽນເພີ້ມຕື່ມອີກເລື່ອງພະພາກທີສາມໃນຕີເອກອະນຸພາບຄື: ພະວິນຍານບໍລິສຸດ. ໃນພະຄໍາພີເຫຼັ້ມທີ່ທ່ານ ໝາຍໄວ້ແລ້ວ ເລື່ອງຍິງຊາວຊາມາເລຍຢູ່ໃນ ໂຢຮັນ ບົດໃດ? ____________________________________

**2** ເຮົາຈະທວນຄືນອີກ ໜ້ອຍ ໜຶ່ງໂດຍຍົກເຫດການໃນຊີວິດ ໂຢຮັນບັບຕິສະໂຕ ມາປຽບກັບຊີວິດຂອງພະເຍຊູ. ໃຫ້ອ່ານ ໂຢຮັນ 4:1

ກ. ຕາມຂໍ້ນີ້ໂຢຮັນເປັນຢ່າງໃດ? ໃຫ້ເລື່ອກໝາຍ √ ເອົາຂໍ້ທີ່ເຫັນວ່າຖືກ.

______ ບໍ່ໄດ້ເຂົ້າຄຸກເທື່ອ (ຍັງໃຫ້ຄົນຮັບບັບຕິສະມາ)

______ ເຂົ້າຄຸກແລ້ວ.

______ ຕາຍແລ້ວ.

ຂ. ເພາະເຫດນັ້ນເຮົາຮູ້ຢູ່ແລ້ວວ່າບົດ 4 ຢູ່ໃນສະໄໝປີໃດ? ເລືອກ

______ ປີທີ່ຕຽມຕົວ. ______ ປີທີ່ມີຊື່ສຽງດີ. ______ ປີທີ່ສໍາເລັດ.

**3** ໃນໂຢຮັນ 4:1-7 ເວົ້າເຖິງເຫດທີ່ ພະເຍຊູ ພົບຍິງນັ້ນ. ໃຫ້ທ່ານອ່ານຕອນນັ້ນດີໆແລະສັງເກດຈຸດ ສໍາຄັນ ແລ້ວຕອບຄໍາຖາມຕໍ່ໄປນີ້:

ກ. ພະເຍຊູ ອອກຈາກແຂວງໃດ? ________________________________________

ຂ. ຈະໄປເຖິງແຂວງໃດ? ______________________________________________

ຄ. ເຫດການນີ້ໄດ້ເກີດຂຶ້ນໃນແຂວງໃດ? __________________________________

ງ. ພະອົງພົບໃຜ? ___________________________________________________

**4** ເຮົາຮຽນດ້ວຍວິທີສັງເກດແລ້ວບາດນີ້ຈະຊອກຫາວ່າມີຈຸດໃດທີ່ຕ້ອງອະທິບາຍຈຶ່ງຈະໃຫ້ເຂົ້າໃຈແຈ້ງດີ ບໍ່? ມີຢູ່ຄື ເລື່ອງຄົນທີ່ ພະເຍຊູ ພົບ. ພະເຍຊູ ໄດ້ພົບໃຜຢູ່ນໍ້າສ້າງ? ________________________ ໃນຫຼັກສູດ ມັດທາຍ ເຫຼັ້ມທີ IV ເຮົາຈະສຶກສາເລື່ອງພວກຊາວຊາມາເລຍຢ່າງຄົບຖ້ວນແຕ່ໃນບົດນີ້ພໍຮູ້ແຕ່ວ່າເຂົາເປັນລູກຫຼານຂອງຄົນຕ່າງປະເທດທີ່ມາຕັ້ງຕົວຢູ່ໃນປະເທດປາແລັດສະຕິນຫຼາຍປີກ່ອນພະເຍຊູ ເກີດ.

**ຕອບ:**

**1** *ບົດ 4*

**2** *ກ. ບໍ່ເຂົາຄຸກເທື່ອ.* *ຂ. ປີທີ່ຕຽມຕົວ.*

**3** *ກ. ຢູດາ.* *ຂ. ຄາລີເລ.* *ຄ. ຊາມາເລຍ.* *ງ. ຍິງຊາວຊາມາເລຍ.*

**4** *ຍິງຊາວຊາມາເລຍ.*

**5** ຄົນຕ່າງປະເທດນັ້ນປະສົມກັບຊາດຢິວທີ່ຢູ່ກ່ອນ. ດ້ານສາສະໜາເຂົາກໍປະສົມເໝືອນກັນ ເອົາຮີດຄອງຢິວແດ່ ເອົາພະທຽມແດ່ ເພາະເຫດນີ້ຜູ້ທີ່ເປັນຊາດຢິວແທ້ຈຶ່ງຊັງຊາວຊາມາເລຍຈົນວ່າເຂົາບໍ່ຢາກຜ່ານດິນສາມາເລຍເລີຍ.

ໃຫ້ທ່ານເບິ່ງແຜນທີ່ນີ້ ຄົນຢິວທີ່ຈະເດີນທາງຈາກ ຢູດາ ໄປຄາລີເລ ບໍ່ຢາກຜ່ານດິນສາມາເລຍຈະໄປທາງໃດ?___________________________

ໃນ ໂຢຮັນ 4:3-4 ເຫັນວ່າ ພະເຢຊູ ໄປທາງໃດ?

___________________________




**6** ກ. ດັ່ງນັ້ນຕາມທຳມະດາຄົນຢິວມີໂອກາດພົບກັບຊາວຊາມາເລຍຫຼາຍບໍ່? ___________

ຂ. ຕາມທຳມະດາຄົນຢິວຈະຊື້ອາຫານຈາກຊາວຊາມາເລຍບໍ່? ___________________

**7** (ວິທີສັງເກດ) ທຳມະດາຄັນຄົນຢິວຈະພົບຊາວຊາມາເລຍ ເຂົາຈະພະຍາຍາມຫຼີກເວັ້ນ ແຕ່ເທື່ອນີ້ບໍ່ໄດ້ຫຼີກ. ໃຫ້ອ່ານໂຢຮັນ 4:7-8 ໂດຍສັງເກດພ້ອມ.

ກ. ພະເຢຊູ ຂໍຫຍັງ? ___________________________

ຂ. ສາວົກພະອົງໄປຫຍັງ? ___________________________

**8** ກ. (ວິທີອະທິບາຍ) ໃນການພົວພັນກັບຊາວຊາມາເລຍນັ້ນ ພະເຢຊູ ຜິດກັບຮີດຄອງຢິວແມ່ນບໍ່?___________________________

ຂ. ເປັນຫຍັງຍິງຊາວຊາມາເລຍຈຶ່ງຕົກໃຈເມື່ອເຫັນພະເຢຊູ ມາຂໍກິນນ້ຳ? (ເບິ່ງຂໍ້ 9)

___________________________

**9** ແມ່ນ ພະເຢຊູ ເປັນຜູ້ທີ່ເວົ້າກ່ອນໃນການນັ້ນພະອົງຜິດຮີດຄອງທີ່ສະແດງຄວາມກຽດຊັງກັບລະຫວ່າງຊາດຢິວແລະ ຊາດຊາມາເລຍແຕ່ພະອົງມີຈຸດປະສົງຢູ່. ໃຫ້ທ່ານອ່ານ ໂຢຮັນ 4:39 ຜົນສຸດທ້າຍມີຫຼາຍຄົນຮັບເຊື່ອໃນພະອົງ. ແມ່ນພວກໃດ? ___________________

**10** ປະກົດວ່າ ພະເຢຊູ ຍອມຜິດຮີດຄອງຢິວໂດຍປາກກັບຍິງຊາວຊາມາເລຍ ເພາະພະອົງຮູ້ວ່າຈະມີຫຍັງ? ___________________________

ຕອບ:

**5** *ທຳມະດາໄປທາງ ຂ. ພະເຢຊູ ໄປທາງ ກ.*

**6** *ກ. ບໍ່. ຂ. ບໍ່*

**7** *ກ. ນ້ຳກິນ. ຂ. ໄປຊື້ອາຫານ.*

**8** *ກ. ແມ່ນ ຂ. ເພາະຄົນຢິວກັບຊາວຊາມາເລຍບໍ່ເຄີຍມີການກ່ຽວຂ້ອງກັນ.*

**9** *ຊາວຊາມາເລຍ.*

**10** *ພະອົງຮູ້ວ່າຊາວຊາມາເລຍຫຼາຍຄົນຈະມາເຊື່ອພະອົງ.*

**11** ແມ່ນດ້ວຍເຫດໃດທີ່ ພະເຢຊູ ປາກກັບຍິງຊາວຊາມາເລຍ? ໃຫ້ໝາຍວົງມົນເອົາຂໍ້ທີ່ຖືກ.
ກ. ພະອົງຢາກນ້ຳຈົນທົນບໍ່ໄດ້.
ຂ. ເພາະພະອົງດີໃຈພົດຣັດຄອງຢິວ.
ຄ. ເພາະພະອົງຮູ້ວ່າຜົນສຸດທ້າຍຊາວຊາມາເລຍຫຼາຍຄົນຈະຮັບເຊື່ອ.

**12** (ວິທີນຳມາໃຊ້) ພະເຢຊູ ສະແດງການເປັນມິດແລະມີນ້ຳໃຈເຜື່ອແຜ່ ໃນທ່າທີເມື່ອເວົ້າກັບຍິງຊາວຊາມາເລຍ. ໃນ ຄວາມເວົ້າຕໍ່ໄປນີ້ ໃຫ້ທ່ານ ໝາຍວົງມົນເອົາຂໍ້ໃດ ທີ່ສະແດງທ່າທີດຽວກັນ.
ກ. "ຄົນທຸກຊາດໃນໂລກຕ້ອງການຮັບຟັງຂ່າວປະເສີດຂອງ ພະເຢຊູ"
ຂ. "ສ່ວນຄົນທີ່ບໍ່ມາໂບດສະເໝີສະເໝີເຂົາເປັນແຕ່ຄົນຜິດບາບ ໝົດ. ບໍ່ຕ້ອງກ່ຽວຂ້ອງກັບເຂົາດີກວ່າ"
ຄ. "ອ້າຍນັ້ນຂີ້ເຫຼົ້າ ບໍ່ຕ້ອງເສຍເວລາປາກກັບເພິ່ນດອກ"
ງ. "ພະອົງເຈົ້າ ຂ້າພະເຈົ້າຂໍໃຫ້ພະອົງເປີດໂອກາດໃຫ້ເປັນພິຍານຕໍ່ຄົນທີ່ບໍ່ທັນຮູ້ພະອົງເທື່ອຈະເປັນຊາດໃດກໍ່ຕາມ"

*ໃຫ້ທ່ານຊອກຫາວິທີອື່ນໆທີ່ຈະເອົາບົດຮຽນນີ້ນຳມາໃຊ້ໃນຊີວິດປະຈຳວັນແລ້ວມາຮັບພິຈາລະນາຮ່ວມກັບໝູ່ໃນ ປະຊຸມ*

**13** ພະເຢຊູເປັນຕົວຢ່າງຕໍ່ເຮົາໃນການທີ່ພະອົງປາກກັບຄົນທີ່ຊາດຢິວທົ່ວໄປຖືວ່າບໍ່ຄວນ.ກາຍນັ້ນໄປໃຫ້ເຮົາສຶກສາຮຽນ ຮູ້ຈາກຄຳທີ່ພະອົງເວົ້ານັ້ນ.ພະເຢຊູເວົ້າກັບເພິ່ນເລື່ອງນ້ຳຢ່າງໃດໃນຂໍ້10? ____________________________________________

**14** ເມື່ອ ພະເຢຊູ ເວົ້າກັບ ນີໂກເດມ ເລື່ອງການບັງເກີດໃໝ່ ນີໂກເດມບໍ່ເຂົ້າໃຈແຕ່ຫົວທີຈົນກວ່າພະເຢຊູ ອະທິ ບາຍແລ້ວ. ເຊັ່ນດຽວກັນກັບຍິງຊາວຊາມາເລຍບໍ່ໄດ້ເຂົ້າໃຈງ່າຍເໝືອນກັນ. ຄຳຕອບໃນຂໍ້ 11 ສະແດງວ່າບໍ່ເຂົ້າໃຈດີ. ໃນຄຳເວົ້າສອງປະການຕໍ່ໄປນີ້ ໃຫ້ທ່ານຂີດຂ້າອອກຂໍ້ໃດບໍ່ຖືກ.
ກ. ທັງນີໂກເດມແລະຍິງຊາວຊາມາເລຍດ້ວຍ ເຂົ້າໃຈທັງທີວ່າ ພະເຢຊູ ເວົ້າເລື່ອງດ້ານວິນຍານ.
ຂ. ທັງນີໂກເດມແລະຍິງຊາວຊາມາເລຍນຶກວ່າ ພະເຢຊູ ເວົ້າເຖິງສິ່ງທຳມະດາດ້ານ ວັດຖຸສິ່ງຂອງ.

ຕອບ:

***11*** *ຄ.ຖືກ.*

***12*** *ກ.ແລະ ງ. ຖືກ.*

***13*** *ນ້ຳອັນປະກອບດ້ວຍຊີວິດ.*

***14*** *ຂີດຂ້າຂໍ້ ກ. ອອກ.*

**15** ເພາະວ່າຍິງຊາວຊາມາເລຍບໍ່ໄດ້ເຂົ້າໃຈຄວາມເວົ້າຂອງ ພະເຢຊູ ພະອົງຕ້ອງ ອະທິບາຍ. ນາງນັ້ນບໍ່ເຂົ້າໃຈດີເລື່ອງຫຍັງ? ____________________________________________

**16** ຄຳວ່າ "ນ້ຳປະກອບດ້ວຍຊີວິດ" ໝາຍຄວາມວ່ານ້ຳໄຫຼ ຫຼື ນ້ຳອອກບໍ່ທີ່ພຸຂຶ້ນມາ. ໃນຕົວຢ່າງ ສີ່ປະການຕໍ່ໄປນີ້ ແມ່ນອັນໃດ ສະແດງເຖິງ "ນ້ຳອັນປະກອບດ້ວຍຊີວິດ"? (ເລືອກເອົາສອງຂໍ້)

ກ. ນ້ຳອອກບໍ່. ຄ. ນ້ຳສ້າງເລິກ.

ຂ. ນ້ຳໃນບຶງ. ງ. ແມ່ນ້ຳທີ່ໄຫຼ.

**17** ກ. ໃນ ໂຢຮັນ 4:14 ພະເຢຊູ ເວົ້າເຖິງນ້ຳພຸ ຫຼື ນ້ຳໄຫຼ? ________________________

ຂ. ໃນ ໂຢຮັນ 7:38 ເດ? ____________________________________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຂຽວຂີດເສັ້ນກ້ອງຄຳ "ນ້ຳພຸ" ໃນ ຢຮ 4:14 ແລະ ຄຳ "ແມ່ນ້ຳ" ໃນ ຢຮ 7:38 |

**18** ນ້ຳອັນປະກອບດ້ວຍຊີວິດເປັນຂອງປະທານມາຈາກໃຜ?(ອ່ານ ຢຮ4:10) _____________

**19** ນ້ຳທີ່ໄຫຼເປັນນ້ຳທີ່ໃຊ້ບໍ່ໝົດຈັກເທື່ອ ເຊັ່ນດຽວກັນນ້ຳອັນປະກອບດ້ວຍຊີວິດມາຈາກ ພະເຈົ້າ ກໍ່ບໍ່ ໝົດຈັກ ເທື່ອເພາະມາຈາກພະເຈົ້າຢູ່ສະເໝີ. ໃຫ້ອ່ານຈາກ ຢຮ 7:38-39 ນ້ຳອັນປະກອບດ້ວຍຊີວິດ ໝາຍເຖິງພະ___________________ (ຈົ່ງຕື່ມຄວາມທີ່ຂາດ)

**20** ໃຫ້ກັບໄປທວນຄືນອີກ ພະເຢຊູຍົກຕົວຢ່າງສອງປະການມາກ່ຽວກັບນ້ຳອັນປະກອບດ້ວຍຊີວິດ ໃນຂ່າວປະ ເສີດ ໂຢຮັນ ຄື:

ກ. ບົດ 4 ຂໍ້ໃດ? __________________ ເອົາຫຍັງມາປຽບທຽບ? _______________

ຂ. ບົດ 7 ຂໍ້ໃດ? __________________ ເອົາຫຍັງມາປຽບທຽບ? _______________

ຄ. "ນ້ຳອັນປະກອບດ້ວຍຊີວິດ" ໝາຍເຖິງ ພະ __________________ (ຕື່ມຄວາມທີ່ຂາດ)

ງ. "ນ້ຳອັນປະກອບດ້ວຍຊີວິດ" ມາຈາກໃຜ? ________________________________

ຕອບ:

**15** *ຄວາມໝາຍທີ່ ພະເຢຊູ ວ່າ"ນ້ຳອັນປະກອບດ້ວຍຊີວິດ"*

**16** *ກ.ແລະ ງ.ຖືກ.*

**17** *ກ.ນ້ຳພຸ. ຂ.ແມ່ນ້ຳໄຫຼ.*

**18** *ພະເຈົາ.*

**19** *ພະວິນຍານ*

**20** *ກ. ຂໍ້ 14...ນ້ຳພຸ. ຄ. ພະວິນຍານ. ຂ. ຂໍ້ 38...ແມ່ນ້ຳ. ງ. ພະເຈົາ.*

**21** ທັງ ຢຮ 4:14 ແລະ 7:38-39 ມີຄຳສອນສອງຢ່າງເລື່ອງຜົນຂອງພະວິນຍານໃນໃຈເຮົາຄື: ຜົນໃນແລະຜົນນອກ.

ກ. ໃນສອງຂໍ້ນັ້ນ (ຢຮ 4:14 ແລະ 7:38) ແມ່ນຂໍ້ໃດທີ່ເວົ້າເຖິງ ພະວິນຍານ ຈະໃຫ້ມີການຟື້ນຟູຢູ່ສະເໝີຢ່າງກັບກັບ ນ້ຳອອກບໍ່ທີ່ພຸຂຶ້ນຕະຫຼອດ? ________________________

ຂ. ຂໍ້ໃດເວົ້າເຖິງ ພະວິນຍານຢູ່ກັບເຮົາໃຫ້ມີພະພອນຈາກ ພະເຈົ້າໄຫຼອອກຈາກເຮົາເພື່ອຊ່ວຍໃນຊີວິດຂອງຄົນອື່ນ? ________________________________________________

**22** ກ. ໃນຄຳປຽບທຽບສອງປະການນັ້ນ ແມ່ນອັນໃດທີ່ສະແດງຜົນໃນຄົນທີ່ເຊື່ອໃນພະເຢຊູ ຈະບໍ່ຫິວນ້ຳອີກ? ______________________________________________________

ຂ. ໃນບົດແລະຂໍ້ໃດ? ________________________________________________

ຄ. ອັນໃດສະແດງເຖິງຜົນຂ້າງນອກທີ່ສະເໜີໃຫ້ຜູ້ອື່ນມາກິນ? ____________________

ງ. ໃນບົດໃດ ຂໍ້ໃດ? __________________________________________________

**23** ແມ່ນຄວາມຫິວຂອງໃຜທີ່ຫາຍໄປໂດຍນ້ຳພຸໃນ ໂຢຮັນ 4:14? (ເລືອກ)

_____________ ຕົວເອງ. ______________ ຜູ້ອື່ນ.

**24** ແມ່ນຄວາມຫິວຂອງໃຜທີ່ຫາຍໄປໂດຍແມ່ນ້ຳທີ່ໄຫຼໃນ ຢຮ 7:38? (ເລືອກ)

_____________ ຕົວເອງ. ______________ ຜູ້ອື່ນ

**25** ເຮົາຮັບທັງການບັງເກີດໃໝ່ແລະນ້ຳອັນປະກອບດ້ວຍຊີວິດເປັນຂອງປະທານມາຈາກພະເຈົ້າກໍ່ແມ່ນຢູ່.ແຕ່ເພື່ອຈະຮູ້ ຈັກວິທີຮັບເອົາໃຫ້ທ່ານອ່ານ ໂຢຮັນ 7:38 ອີກ. ມີເງື່ອນໄຂໃດກ່ອນຈະມີນ້ຳອັນມີຊີວິດໄດ້? ________________________________________________

**26** ເຮົາສຶກສາເລື່ອງຍິງຊາວຊາມາເລຍແລະໂດຍໃຊ້ວິທີປຽບທຽບເຮົາໄດ້ຮຽນຮູ້ຫຼາຍສິ່ງ ຫຼາຍຢ່າງເລື່ອງ ພະວິນຍານບໍ ລິສຸດ. ພະວິນຍານນັ້ນເປັນສະພາບທີ່ສາມໃນຕົວເອກອະນຸພາບ. ອີກສອງສະພາບແມ່ນໃຜ? ____________________________________________________

ຕອບ:

**21** *ກ. ໂຢຮັນ 4:14 ຂ. ໂຢຮັນ 7:38*

**22** *ກ. ນ້ຳພຸ. ຂ. ຢຮ 4:14 ຄ. ແມ່ນ້ຳທີ່ໄຫຼ. ງ. ຢຮ 7:38*

**23** *ຕົວເອງ.*

**24** *ຜູ້ອື່ນ.*

**25** *ຕ້ອງວາງໃຈໃນ ພະເຢຊູ.*

**26** *ພະບິດາ ພະບຸດ ຫຼື ພະເຢຊູ.*

**27** ພະບຸດນັ້ນແມ່ນພະເຢຊູຄຼິດເຈົ້າ. ໃນບົດທາຍເຫຼັ້ມທີ 1 ເຮົາຮຽນມາແລ້ວວ່າ ພະເຢຊູເປັນທັງພະບຸດຂອງພະ ເຈົ້າແລະບຸດມະນຸດດ້ວຍ.

ກ. ໃນສອງຊື່ນັ້ນອັນໃດເປັນຄຳລັກສະນະ ພະເຈົ້າ? ____________________________

ຂ. ອັນໃດເປັນຄຳລັກສະນະມະນຸດ? ____________________________________

**28** ໃນເລື່ອງກ່ຽວກັບຍິງຊາວຊາມາເລຍນີ້ເຮົາເຫັນລັກສະນະຂອງພະອົງ ທັງສອງປະການອອກມາ.

ກ. ໃນ ໂຢຮັນ 4:16-18 ເຮົາເຫັນອຳນາດຂອງ ພະອົງໃນລັກສະນະໃດ? ____________

ຂ. ໃນ ຢຮ 4:6 ເຫັນລັກສະນະໃດ? ____________________________________

**29** ໃນ ໂຢຮັນ 4:16-18 ບໍ່ມີຄົນມາບອກ ພະເຢຊູ ກ່ອນວ່າຍິງນັ້ນມີຜົວຫຼາຍຄົນ ແຕ່ ພະເຢຊູ ຮູ້ຢູ່ກ່ອນແລ້ວ! ໃນເຫຼັ້ມນີ້ບົດທີ 10 ເຮົາສຶກສາເລື່ອງຄຸນສົມບັດຂອງ ພະເຈົ້າ ຄື: ພະເຈົ້າ ຮູ້ທັງໝົດພະເຈົ້າ ມີລິດທານຸພາບສູງສຸດພະເຈົ້າຢູ່ທຸກບ່ອນທຸກທີ່ ແລະ ພະເຈົ້າຢູ່ຕະຫຼອດໄປ. ທີ່ພະເຢຊູ ຮູ້ເລື່ອງຜົວຂອງຍິງນັ້ນສະແດງຄຸນສົມບັດໃດ? _________________________

**30** ຍິງຊາວຊາມາເລຍຮັບຮູ້ວ່າ ພະເຢຊູ ບໍ່ແມ່ນຄົນທຳມະດາ. ໃນຂໍ້ 19 ເພິ່ນຮ້ອງ ພະເຢຊູ ວ່າເປັນຜູ້ທຳນວາຍແຕ່ມາເຖິງ ຂໍ້ 29 ເພິ່ນຮັບຮູ້ວ່າ ພະເຢຊູ ເປັນພະຄຼິດແທ້ເພາະເຫດໃດ? ໃຫ້ໝາຍວົງມົນເອົາຂໍ້ທີ່ຖືກ.

ກ. ພະອົງເວົ້າເຖິງນ້ຳອັນປະກອບດ້ວຍຊີວິດ.

ຂ. ພະອົງເຮັດການອັດສະຈັນ.

ຄ. ພະອົງບອກເຖິງສິ່ງທີ່ນາງເຮັດມາແລ້ວ.

ງ. ພະເຢຊູ ຍອມປາກກັບຊາວຊາມາເລຍ.

**31** ໃຫ້ອ່ານໂຢຮັນ 4:25-26 ພະເຢຊູ ຮັບວ່າຕົວເອງເປັນ ພະຄຼິດ ບໍ່? _________________
ຕອບໂດຍກ່າວຄວາມໃດ? ______________________________________________

_______________________________________________________________

**32** ໃຫ້ເຮົາສຶກສາເລື່ອງພະພາກໃນຕີເອກອະນຸພາບໂດຍອ່ານ ຢຮ 4:19-26 ໃນຂໍ້ 23 ເວົ້າເຖິງການນະມັດສະການ ພະ ເຈົ້າ ພະພາກໃດ? _________________________________

ຕອບ:

**27** *ກ. ພະບຸດຂອງ ພະເຈາ.* *ຂ. ບຸດມະນຸດ.*

**28** *ກ. ພະບຸດຂອງ ພະເຈາ.* *ຂ. ບຸດມະນຸດ.*

**29** *ພະເຈາ ຮູ້ທັງໝົດ.*

**30** *ຄ. ຖືກ.*

**31** *ຮັບ... "ຜູ້ທີ່ເວົາກັບເຈາຢູ່ນີ້ແຫຼະ ຄື ທ່ານຜູ້ນັ້ນ"*

**32** *ພະບິດາ.*

**33** ເມື່ອນາງສຳນຶກໃຈວ່າພະອົງຮູ້ຈັກທຸກສິ່ງໃນຊີວິດ ນາງກໍ່ເລີຍຍົກເລື່ອງໃໝ່ມາເວົ້າ. ຊາດຢິວກັບຊາວຊາມາເລຍ ເຄີຍໂຕ້ແຍ້ງກັນເລື່ອງທີ່ນະມັດສະການ. ນາງກໍ່ຖາມ ພະເຢຊູ ວ່າສົມຄວນຈະນະມັດສະການ ພະເຈົ້າບ່ອນໃດ ພະເຢຊູໄດ້ຕອບນາງຢ່າງໃດ ໃນຂໍ້ 21? ໃຫ້ ໝາຍເອົາຂໍ້ທີ່ຖືກ.

ກ. ເໝາະສົມທີ່ຈະນະມັດສະການໃນເຢລູຊາເລັມ.

ຂ. ເໝາະສົມທີ່ຈະນະມັດສະການໃນຊາມາເລຍ.

ຄ. ທີ່ນະມັດສະການ ພະເຈົ້າ ບໍ່ຈຳກັດ.

**34** ບໍ່ມີບ່ອນ ໜຶ່ງ ບ່ອນໃດທີ່ຕ້ອງນະມັດສະການ ພະເຈົ້າ ເພາະເຫດໃດ? ໃຫ້ ໝາຍເອົາຂໍ້ທີ່ຖືກ.

ກ. ພະເຈົ້າ ຮູ້ທັງ ໝົດ.

ຂ. ພະເຈົ້າ ຢູ່ທຸກບ່ອນທຸກທີ່.

ຄ. ພະເຈົ້າ ມີລິດທານຸພາບສູງສຸດ.

**35** ໃນ ໂຢຮັນ 4:24 ພະເຢຊູ ບອກນາງວ່າ ພະເຈົ້າ ຊົງເປັນວິນຍານ ແລະຜູ້ທີ່ນະມັດສະການ ພະເຈົ້າ ຕ້ອງນະມັດສະ ການດ້ວຍຈິດ ____________________ ແລະ __________________ (ຕື່ມຄວາມໃຫ້ຖືກສົມບູນ)

**36** ໃນຄຳຊຽນສາມປະການຕໍ່ໄປນີ້ໃຫ້ທ່ານຂີດຂ້າອອກຂໍ້ໃດທີ່ບໍ່ຖືກ.

ກ. ເຮົາຕ້ອງຢູ່ໃນໂບດກ່ອນຈະນະມັດສະການ ພະເຈົ້າ ໄດ້.

ຂ. ເຮົານະມັດສະການ ພະເຈົ້າ ບ່ອນໃດກໍ່ໄດ້ ແລະວັນເວລາໃດກໍ່ໄດ້ເພາະຂຶ້ນກັບສະພາບໃນແຕ່ລະແຫ່ງ.

ຄ. ເຮົານະມັດສະການ ພະເຈົ້າ ໄດ້ແຕ່ສະເພາະວັນອາທິດ.

**37** ພະເຢຊູ ບອກຍິງຊາວຊາມາເລຍວ່າ ພະເຈົ້າ ເປັນວິນຍານ ເພາະເຫດນັ້ນເຮົາສາມາດຈະນະມັດສະການພະເຈົ້າໃນທີ່ ໃດ? ______________________________________________

ຕອບ:

***33*** *ຄ. ຖືກ.*

***34*** *ຂ. ຖືກ.*

***35*** *ວິນຍານ...ຄວາມຈິງ.*

***36*** *ຂີດຂ້າຂໍ້ ກ. ແລະ ຄ. ອອກ.*

***37*** *ບ່ອນໃດກໍ່ໄດ້ ທີ່ເໝາະສົມ (ຄຳຄ້າຍຄືກໍ່ໄດ້)*

**38** ມີຄຳສອນກ່ຽວກັບຕີເອກອະນຸພາບຢູ່ຫຼາຍບ່ອນໃນພະຄຳພີ. ໃນເລື່ອງກ່ຽວກັບຍິງຊາວຊາມາເລຍນີ້ກໍ່ມີ ໃຫ້ ເຮົາສະຫລຸບຄວາມ. (ຕໍ່ໄປນີ້ໃຫ້ທ່ານຕື່ມຄວາມໃສ່ບ່ອນວ່າງໃຫ້ໄດ້ເນື້ອຄວາມຖືກສົມບູນ)

ກ. ເຮົາສາມາດນະມັດສະການ ພະເຈົ້າ ໂດຍຈິດວິນຍານຂອງເຮົາ ເພາະ ພະເຈົ້າ ຊົງເປັນວິນຍານ. ນີ້ກໍໝາຍຄວາມ ວ່າເຮົານະມັດສະການພະບິດາເຈົ້າບ່ອນ_________ກໍ່ໄດ້ ເພາະ ໂຢຮັນ 4:24 ສອນວ່າ ພະເຈົ້າ ຊົງ ເປັນ __________________ ແລະ ບໍ່ຈຳກັດຢູ່ກັບບ່ອນໃດ ບ່ອນ ໜຶ່ງ.

ຂ. 1. ພະເຢຊູ ພະບຸດຂອງ ພະເຈົ້າ ມີທັງລັກສະນະ ພະເຈົ້າ ແລະລັກສະນະມະນຸດ. ລັກສະນະມະນຸດປາກົດ ອອກມາວ່າພະອົງເດີນທາງ __________ ແລະ ຫິວ __________

2. ລັກສະນະພະເຈົ້າປາກົດອອກເພາະພະອົງຮູ້ທຸກສິ່ງທຸກຢ່າງໃນຊີວິດຂອງຍິງຊາວຊາມາເລຍ. ການນີ້ສະແດງຄຸນສົມບັດໃດ ຂອງ ພະເຈົ້າ? ________________________

ຄ. ຜົນຂອງພະວິນຍານໃນຊີວິດຄຼິດສະຕຽນປາກົດມາທາງຂ້າງໃນແລະຂ້າງນອກ.

1. ພະເຢຊູ ຍົກອັນໃດມາປຽບທຽບກັບ ພະວິນຍານໃນ ໂຢຮັນ ບົດ 4? ____________

2. ໃນຂໍ້ 10 ແມ່ນໃຜປະທານນ້ຳອັນມີຊີວິດມາໃຫ້? _________________________

3. ໃນ ໂຢຮັນ 7:38 ມີເງື່ອນໄຂໃດກ່ອນຈະຮັບຂອງປະທານນັ້ນ? ______________

4. ຜົນໃນຊີວິດຄືນ້ຳພຸໃນດ້ານໃດ? _____________________________________

5. ຜົນທາງນອກຄືແມ່ນ້ຳໄຫຼເປັນປະໂຫຍດໃນດ້ານໃດ? _____________________

*ຢ່າລືມຕອບບົດເສັງເລີຍເນີ!*

ຕອບ:

**38** *ກ. ບ່ອນໃດກໍ່ໄດ້. ວິນຍານ.*

*ຂ. 1. ເມື່ອຍ...ນ້ຳ.*

*2. ພະອົງຮູ້ທັງ ໝົດ.*

*ຄ. 1. ນ້ຳອັນປະກອບດ້ວຍຊີວິດ.*

*2. ພະເຈາ.*

*3. ວາງໃຈໃນ ພະເຢຊູ ກ່ອນ.*

*4. ບໍ່ຢາກອີກຈັກເທື່ອດ້ານວິນຍານ (ຄຳຄ້າຍຄືກັບກໍ່ໄດ້)*

*5. ຈະເອົາໃຫ້ຜູ້ອື່ນມີດ້ວຍ (ຄຳຄ້າຍຄືກໍ່ໄດ້)*